*ເຈັ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ໂຣກໄທຟອຍ

*ໂຣກໄທຟອຍເກີດຂຶ້ນຍ້ອນການຕິດເຊື້ອຈາກແບັກທີເຣັຍຊຶ່ງເອີ້ນວ່າ **Salmonella Typhi.** ຢູ່ໃນອອສເຕຣເລັຍ ການຕິດເຊື້ອໄທຟອຍສ່ວນຫຼາຍແມ່ນຕິດມາຈາກຕ່າງປະເທດ ແລະເກີດຂຶ້ນຫຼັງຈາກກິນອາຫານຫຼືດື່ມນ້ຳທີ່ມີເຊື້ອໂຣກນີ້ ຢູ່ໃນປະເທດທີ່ມີໂຣກໄທຟອຍເປັນກັນແຜ່ຫຼາຍ.*

## ໂຣກໄທຟອຍແມ່ນຫຍັງ?

ໂຣກໄທຟອຍເກີດຂຶ້ນຈາກການຕິດເຊື້ອແບັກທີເຣັຍຊຶ່ງເອີ້ນວ່າ *Salmonella* Typhi. ໃນອອສເຕຣເລັຍ, ການຕິດເຊື້ອໂຣກໄທຟອຍສ່ວນຫຼາຍແມ່ນຕິດມາຈາກຕ່າງປະເທດ ແລະ ເກີດຂຶ້ນຫຼັງຈາກກິນອາຫານຫຼືດື່ມນ້ຳທີ່ມີເຊື້ອໂຣກໃນປະເທດທີ່ຄົນເປັນໄທຟອຍກັນແຜ່ຫຼາຍ. ການຕິດເຊື້ອຊະນິດນີ້ບໍ່ແມ່ນຊະນິດດຽວກັນກັບການຕິດເຊື້ອຈາກ *Salmonella*.

## ໂຣກນີ້ມີອາການຢ່າງໃດແດ່?

ຄົນທີ່ເປັນໂຣກໄທຟອຍອາດມີອາການບໍ່ຮຸນແຮງຫຼືອາດຮ້າຍແຮງໄດ້. ອາການຂອງໄຂ້ໄທຟອຍອາດຮວມມີອາການໄຂ້, ເຈັບຫົວ, ຮູ້ສຶກບໍ່ສະບາຍທົ່ວໄປ, ກິນເຂົ້າບໍ່ແຊບ, ແລະ ໄອແຫ້ງ. ການເຕັ້ນຂອງຫົວໃຈຊ້າລົງ ແລະ ມ້າມໃຫຍ່ຂຶ້ນ. ບາງຄົນອາດເກີດຈຸດແດງຕາມລຳຕົວ. ບາງເທື່ອກໍອາດທ້ອງຜູກຫຼືຖອກທ້ອງ. ອາການຕ່າງໆຈະເລີ້ມຂຶ້ນແຕ່ 1 ຫາ 3 ອາທິດຫຼັງຈາກຕິດເຊື້ອແລ້ວ. ບາງຄົນກໍບໍ່ມີອາການຫຍັງເລີຍ.

## ໂຣກນີ້ແຜ່ພາຍຢ່າງໃດ?

ໃນອອສເຕຣເລັຍ, ໂຣກໄທຟອຍແມ່ນຕິດມາຈາກປະເທດກຳລັງພັທນາເຊັ່ນອິນໂດນີເຊັຍແລະປະເທດໃນລຸ່ມພາກພື້ນອິນເດັຍ. ຄົນສ່ວນຫຼາຍຕິດໂຣກໄທຟອຍຈາກການກິນອາຫານຫຼືດື່ມນ້ຳທີ່ມີເຊື້ອໂຣກຊຶ່ງແຜ່ພາຍໂດຍຄົນທີ່ມີພະຍາດນີ້ຢູ່ແລ້ວ, ຮວມທັງຄົນທີ່ມີພະຍາດແຕ່ບໍ່ມີອາການຫຍັງ. ໝາກໄມ້ແລະຜັກດິບ, ນົມ ແລະ ຫອຍກາບ ແມ່ນ ອາຫານທີ່ສ່ວນຫຼາຍມັກກ່ຽວພັນກັບການເຈັບປ່ວຍຈາກພະຍາດນີ້.

## ແມ່ນໃຜແດ່ທີ່ສ່ຽງຕໍ່ການຕິດພະຍາດນີ້?

ທຸກໆຄົນອາດຕິດພະຍາດໄທຟອຍນີ້ໄດ້, ຢ່າງໃດກໍດີ ໄດ້ມີຢາວັກຊີນສຳລັບສັກປ້ອງກັນແລ້ວ ແລະ ຜູ້ທີ່ຈະເດີນທາງໄປປະເທດຊຶ່ງມີຄົນເປັນໂຣກໄທຟອຍກັນແຜ່ຫຼາຍ ຄວນສັກຢາປ້ອງກັນໄວ້. ທ່ານສາມາດເຂົ້າໄປເບິ່ງຄຳແນະນຳສຳລັບຜູ້ເດີນທາງໄດ້ທີ່ສູນຄວບຄຸມພະຍາດ ທີ່ ເວັບໄຊຕ໌ (www.cdc.gov).
ຄົນໃນຄອບຄົວ ຫຼື ຜູ້ທີ່ໄດ້ເດີນທາງໄປກັບຄົນທີ່ຕິດພະຍາດໄທຟອຍ ຈະໄດ້ຖືກກວດກາຫາໂຣກໄທຟອຍຈາກ ພະແນກສາທາຣະນະສຸກໃນເຂດທ້ອງຖິ່ນຂອງຕົນ. ຜູ້ທີ່ໄດ້ພົວພັນກັບຄົນເປັນພະຍາດຄວນຮູ້ເຖິງອາການຂອງໂຣກໄທຟອຍແລະຄວນໄປຫາໝໍປະຈຳ ຄອບຄົວຖ້າມີອາການຂອງໂຣກເກີດຂຶ້ນ.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

ຜູ້ທີ່ຈະເດີນທາງໄປປະເທດກຳລັງພັທນາຄວນສັກຢາປ້ອງກັນກ່ອນອອກເດີນທາງ ແລະ:

- ຫຼີກເວັ້ນຈາກການກິນອາຫານທີ່ບໍ່ໄດ້ຕົ້ມສຸກ, ຮວມທັງໝາກໄມ້ ນອກເສັຍຈາກວ່າໝາກໄມ້ນັ້ນປອກເປືອກໄດ້
- ຫຼີກເວັ້ນນ້ຳທີ່ບໍ່ໄດ້ກັ່ນໃຫ້ສະອາດ, ຮວມທັງນ້ຳກ້ອນນຳ
- ດື່ມນ້ຳຈາກແກ້ວທີ່ມີຝາອັດ
- ລ້າງມືຫຼັງຈາກເຂົ້າຫ້ອງນ້ຳແລະກ່ອນກິນອາຫານ
- ຫຼີກເວັ້ນຈາກການກິນອາຫານຕາມຮ້ານຂ້າງທາງ
- ໃຫ້ໝັ້ນໃຈວ່າອາຫານຮ້ອນນັ້ນໄດ້ມີການຫຸງຕົ້ມຈົນສຸກດີແລະໃຫ້ກິນອາຫານນັ້ນໃນລະຫວ່າງທີ່ມັນຍັງຮ້ອນຢູ່.

ຖ້າເດີນທາງພາຍໃນປະເທດອອສເຕຣເລັຍກໍບໍ່ຈຳເປັນຕ້ອງສັກຢາປ້ອງກັນ.

ຄົນທີ່ເປັນໂຣກໄທຟອຍ, ຫຼືຄົນທີ່ຢູ່ເຮືອນດຽວກັນກັບຜູ້ທີ່ເປັນໂຣກໄທຟອຍ, **ຕ້ອງບໍ່**ໄປເຮັດວຽກຖ້າຫາກວ່າວຽກຂອງຕົນ ແມ່ນກ່ຽວຂ້ອງກັບການຈັບບາຍອາຫານ ຫຼື ຕ້ອງດູແລເດັກນ້ອຍ, ຄົນເຈັບ ຫຼື ຄົນຊະຣາ, ແລະບໍ່ຄວນແຕ່ງອາຫານໃຫ້ຄົນອື່ນກິນ. ຕ້ອງໄດ້ເອົາອາຈົມໄປກວດຫຼາຍເທື່ອເພື່ອຈະໄດ້ຮູ້ວ່າທ່ານບໍ່ມີເຊື້ອໂຣກໄທຟອຍແລ້ວ. ພະແນກສາທາຣະນະສຸກທ້ອງຖິ່ນຈະບອກໃຫ້ທ່ານຊາບວ່າເວລາໃດທີ່ທ່ານຈະສາມາດກັບຄືນໄປເຮັດວຽກໄດ້.

ຄົນທີ່ອາດຕິດເຊື້ອມາຈາກແຫຼ່ງດຽວກັນ, ຍົກຕົວຢ່າງ ເດີນທາງໄປຕ່າງປະເທດ, ຈະຖືກບອກໃຫ້ຢຸດເຮັດວຽກກ່ອນ ຖ້າວຽກຂອງເຂົາເຈົ້າກ່ຽວຂ້ອງກັບການຈັບບາຍອາຫານຫຼືດູແລເດັກ, ຄົນເຈັບຫຼືຄົນຊະຣາ. ເຂົາເຈົ້າກໍຕ້ອງໄດ້ເອົາອາຈົມໄປກວດເຊັ່ນກັນ.

ເນື່ອງຈາກວ່າເຊື້ອໂຣກໄທຟອຍສາມາດຕິດຢູ່ກັບມື ສະນັ້ນຈຶ່ງເປັນສິ່ງສຳຄັນຫຼາຍທີ່ເຮົາຕ້ອງລ້າງມືໃຫ້ສະອາດທີ່ຖ້ວນຫຼັງຈາກເຂົ້າຫ້ອງນ້ຳ ແລະ ກ່ອນປຸງແຕ່ງອາຫານ. ຄວນລ້າງມືດ້ວຍສະບູແລະນ້ຳຢ່າງນ້ອຍ 15 ວິນາທີ, ໄລອອກ ແລະ ເຊັດມືໃຫ້ແຫ້ງດີ.

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ເພື່ອກວດຫາເຊື້ອໂຣກໄທຟອຍ, ທ່ານໝໍປະຈຳຄອບຄົວຂອງທ່ານຫຼືໂຮງໝໍໃນເຂດທ້ອງຖິ່ນຈະສົ່ງຕົວຢ່າງເລືອດຫຼືອາຈົມໄປໃຫ້ທາງຫ້ອງທົດລອງທຳການວິຈັຍ.

## ຈະປິ່ນປົວໂຣກນີ້ໄດ້ຢ່າງໃດ?

ຄົນທີ່ເປັນໂຣກໄທຟອຍອາດຕ້ອງໄດ້ນອນໂຮງໝໍແລະອາດຕ້ອງໄດ້ຮັບການປິ່ນປົວໂດຍໃຊ້ຢາປະຕິຊີວະນະ (antibiotics). ບາງຄົນກໍອາດບໍ່ສໍ່ສະແດງອາການຫຍັງເລີຍ ແຕ່ວ່າ ອາດເປັນຜູ້ຖືເຊື້ອໄທຟອຍໃນໂຕ. ຜູ້ທີ່ຖືເຊື້ອກໍຕ້ອງໄດ້ປິ່ນປົວໂດຍການໃຊ້ຢາປະຕິຊີວະນະເຊັ່ນດຽວກັນ.

## ຜແນກສາທາຣະນະສຸກມີທ່າທີຢ່າງໃດຕໍ່ໂຣກນີ້?

- ທ່ານໝໍ, ໂຮງໝໍ ແລະ ຫ້ອງທົດລອງ ຕ້ອງລາຍງານກໍຣະນີຂອງໂຣກໄທຟອຍຕໍ່ຜແນກສາທາຣະນະສຸກທ້ອງຖິ່ນ.
- ພະນັກງານຂອງຜແນກສາທາຣະນະສຸກທ້ອງຖິ່ນຈະສຳພາດທ່ານໝໍຫຼືຄົນເຈັບ (ຫຼືຜູ້ດູແລ) ເພື່ອຄົ້ນຫາສາເຫດວ່າການຕິດເຊື້ອເກີດຂຶ້ນຢ່າງໃດ.
- ທາງການຄວບຄຸມອາຫານແຫ່ງຣັດ ນຊວ, ໂດຍການຮ່ວມມືກັບ ກະຊວງສາທາຣະນະສຸກແຫ່ງຣັດ ນຊວ, ມີໜ້າຮັບຜິດຊອບໃນການຕິດຕາມເບິ່ງສະພາບແວດລ້ອມຂອງບ່ອນທີ່ມີການຈັບບາຍອາຫານທີ່ມີເຊື້ອໂຣກໄທຟອຍ.
- ຜແນກສາທາຣະນະສຸກໃນເຂດທ້ອງຖິ່ນຂອງທ່ານສາມາດໃຫ້ຄຳແນະນຳໄດ້ຕື່ມກ່ຽວກັບການຫຼີກເວັ້ນບໍ່ໄປເຮັດວຽກຫຼືໂຮງຮຽນ. ຜູ້ທີ່ຖືກສັ່ງໃຫ້ຢຸດບໍ່ໄປເຮັດວຽກຕ້ອງໄດ້ເອົາອາຈົມກວດຫຼາຍຄັ້ງກ່ອນເຂົາເຈົ້າຈະໄດ້ຖືກອະນຸຍາດໃຫ້ກັບໄປເຮັດວຽກຄືນ.

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055**

[www.health.nsw.gov.au](http://www.health.nsw.gov.au)